# ວິທີການຍື່ນຄຳຟ້ອງຮ້ອງໃນການຖືກຈຳແນກນຳຫ້ອງການ ວ່າດ້ວຍສິດທິພົນລະເຮືອນ

## ພາກສະເໜີ

ຫ້ອງການວ່າດ້ວຍສິດທິພົນລະເມືອງ (OCR) ໄດ້ນຳໃຊ້ກົດໝາຍກ່ຽວກັບສິດທິຂອງພົນລະເມືອງທີ່ຫ້າມທຳການຈຳແນກ. ໂດຍອີງໃສ່ພື້ນຖານດ້ານເຊື້ອຊາດ, ສີຜິວ, ຊາດກຳເໜີດ, ເພດ, ຄວາມເສັຽອົງຄະ ແລະອາຍຸຢູ່ໃນໂຄງການ ຫລື ກິດຈະກຳທີ່ໄດ້ຮັບທຶນຊ່ວຍເຫລືອຈາກລັດຖະບານກາງ. ໂດຍຜ່ານກະຊວງສຶກສາ (Department of Education) (ED). ການຈຳແນກໂດຍອີງໃສ່ພື້ນຖານດ້ານເຊື້ອຊາດ, ສີຜິວ ແລະ ຊາດກຳເໜີດ. ແມ່ນໄດ້ຖືກເກືອດຫ້າມຢູ່ໃນມາດຕາ (Title) VI ຂອງກົດໝາຍວ່າດ້ວຍສິດທິພົນລະເມືອງຂອງປີ (Civil Rights Act of) 1964; ການຈຳແນກໂດຍອີງໃສ່ເພດ ແມ່ນຖືກເກືອດຫ້າມໂດຍມາດຕາ (Title) IX ຂອງກົດໝາຍສະບັບດັດແກ້ວ່າດ້ວຍການສຶກສາຂອງປີ (Education Amendments of) 1972; ການຈຳແນກໂດຍອີງໃສ່ຄວາມເສັຽອົງຄະ ແມ່ນຖືກເກືອດຫ້າມໂດຍພາກ (Section) 504 ຂອງກົດໝາຍວ່າດ້ວຍການຟື້ນຟູຮ່າງກາຍຄືນຂອງປີ (Rehabilitation Act of) 1973 ແລະ ມາດຕາ (Title) II ຂອງກົດໝາຍ ວ່າດ້ວຍການເສັຽອົງຄະຂອງ ຊາວອາເມຣິກັນຂອງປີ (Americans with Disabilities Act of) 1990; ມາດຕາ (Title) II ຫ້າມທຳການຈຳແນກ. ໂດຍອີງໃສ່ ຄວາມເສັຽອົງຄະໂດຍສຳນັກງານຂອງລັດຖະບານ ເຖິງແມ່ນວ່າສຳນັກງານເຫລົ່ານັ້ນ ຈະໄດ້ຮັບ ຫລື ບໍ່ໄດ້ຮັບຄວາມຊ່ວຍເຫລືອທາງດ້ານການເງິນຈາກລັດຖະບານກໍ່ຕາມ; ແລະ ການຈຳແນກໂດຍອີງໃສ່ອາຍຸ ແມ່ນຖືກເກືອດຫ້າມໂດຍກົດໝາຍວ່າດ້ວຍການຈຳແນກໂດຍອີງໃສ່ອາຍຸຂອງປີ (Age Discrimination Act of) 1975.

ກົດໝາຍວ່າດ້ວຍສິດທິພົນລະເມືອງເຫລົ່ານີ້ ໄດ້ວາງໄວ້ສຳລັບອົງການດ້ານການສຶກສາຂອງລັດທຸກອົງການ, ລະບົບໂຮງຮຽນຊັ້ນປະຖົມ ແລະມັດທະຍົມ, ວິທະຍາໄລ ແລະມະຫາວິທະຍາໄລ, ໂຮງຮຽນວິຊາຊີບ, ໂຮງຮຽນເອກະຊົນຕ່າງໆ, ອົງການຟື້ນຟູວິຊາຊີບ, ຫ້ອງສະມຸດ ແລະ ຫໍພິພິດທະພັນທີ່ໄດ້ຮັບທຶນຊ່ວຍເຫລືອຈາກລັດຖະບານກາງໂດຍຜ່ານກະຊວງສຶກສາ. ໂຄງການ ແລະ ກິດຈະກຳຕ່າງໆ ທີ່ໄດ້ຮັບທຶນຈາກກະຊວງສຶກສາຈະຕ້ອງໃຫ້ຄວາມຊ່ວຍເຫລືອ, ຜົນປະໂຫຍດ ຫລື ການບໍລິການແບບທີ່ບໍ່ມີການຈຳແນກ. ຄວາມຊ່ວຍເຫລືອ, ຜົນປະໂຫຍດ ຫລື ການບໍລິການອາດລວມມີ ແຕ່ບໍ່ຈຳກັດຢູ່ພຽງແຕ່ໃນດ້ານການຮັບເອົາເຂົ້າຮຽນ, ການລະດົມມາເຂົ້າຮຽນ, ການຊ່ວຍເຫລືອດ້ານການເງິນ, ຫລັກສູດການຮຽນ, ການປະຕິບັດຕໍ່ ແລະ ການບໍລິການແກ່ນັກຮຽນ, ການໃຫ້ຄຳປຶກສາ ແລະ ຄຳແນະນຳ, ຂະແໜງວິຊາຮຽນ, ການໃຫ້ເຮັດບົດຝຶກຫັດໃນຫ້ອງຮຽນ, ການ ໃຫ້ຄະແນນ, ການສຶກສາວິຊາຊີບ, ການເຄື່ອນໄຫວນອກຫລັກສູດ, ກາຍຍະສຶກສາ, ກິລາ, ການໃຫ້ທີ່ຢູ່ອາໃສ ແລະການຈ້າງງານ.

OCR ຍັງປະຕິບັດກົດໝາຍ ວ່າດ້ວຍຄວາມສະເໝີພາບໃນການໄດ້ຮັບໂອກາດເຂົ້າເຖິງການຈັດຕັ້ງເຍົາວະຊົນສຳລັບເດັກຊາຍ (Boy Scouts of America Equal Access Act), ເຊິ່ງເປັນສ່ວນນຶ່ງຂອງກົດໝາຍວ່າດ້ວຍການສຶກສາໃນຊັ້ນປະຖົມແລະ ມັດທະຍົມ. ພາຍໃຕ້ກົດໝາຍນີ້ ຫ້ອງການ OCR ສາມາດສືບສວນຄຳຟ້ອງຮ້ອງທີ່ກ່ຽວຂ້ອງກັບການປະຕິເສດຂອງຄວາມສເມີພາບ ຫລື ເຫດຜົນເໝາະສົມເຖິງການພົບຕໍ່ ຫລື ການແບ່ງແຍກ ຂັດຂວາງບາງກຸ່ມ ຫ້ອງການປະກອບກິດຈະການກັບເຍົາວະຊົນຊາຍໜຸ່ມ ຫລື ປະກອບກິດຈະການກັບຊາຍໜຸ່ມອື່ນໆ ໄດ້ມີລາຍຊື່ໃນມາດຕາ 36. ຂອງປະມວນກົດຫມາຍຂອງສະຫະລັດ (United State Code) ໂດຍໂຮງຮຽນປະຖົມຂອງຫລວງ, ໂຮງຮຽນມັດທະຍົມຂອງຫລວງ, ຫລື ອົງການຂັ້ນລັດ ຫລື ຂັ້ນທ້ອງຖິ່ນທີ່ໄດ້ຮັບທຶນຈາກກະຊວງສຶກສາ.

ສິງຫາ 2011

## ໃຜສາມາດຍື່ນຄຳຟ້ອງໃນການຖືກຈຳແນກໄດ້

ຜູ້ໃດທີ່ຄິດວ່າ ສະຖາບັນການສຶກສາທີ່ໄດຮັບທຶນຊ່ວຍເຫລືອຈາກລັດຖະບານກາງ ໄດ້ທຳການຈຳແນກຕໍ່ຄົນຜູ້ໃດຜູ້ໜຶ່ງ ໂດຍອີງໃສ່ພື້ນຖານດ້ານເຊື້ອຊາດ, ສີຜິວ, ຊາດກຳເໜີດ, ເພດ, ຄວາມເສັຽອົງຄະ ຫລື ອາຍຸ,ຫລື ຜູ້ໃດທີ່ຄິດວ່າໂຮງຮຽນປະຖົມ ຫລື ມັດທະຍົມ, ຫລື ອົງການການສຶກສາຢູ່ໃນຂັ້ນລັດ ຫລື ຂັ້ນທ້ອງຖິ່ນ ໄດ້ລະເມີດກົດໝາຍວ່າດ້ວຍຄວາມສະເໝີພາບໃນການໄດ້ຮັບໂອກາດເຂົ້າເຖິງການຈັດຕັ້ງເຍົາວະຊົນສຳລັບເດັກຊາຍ (Boy Scouts of America Equal Access Act), ແມ່ນສາມາດຍື່ນຄຳຟ້ອງຮ້ອງໄດ້. ຜູ້ທີ່ຍື່ນ ຫລື ອົງການທີ່ຍື່ນຄຳຟ້ອງຮ້ອງບໍ່ຈຳເປັນຕ້ອງແມ່ນຜູ້ຖືກເຄາະຮ້າຍໃນການຈຳແນກທີ່ຢູ່ໃນການກ່າວຫານີ້ ແຕ່ຫາກວ່າ ພວກເຂົ້າເຈົ້າຕ້ອງທຳການຟ້ອງຮ້ອງໃນນາມເປັນຕົວແທນໃຫ້ຄົນອື່ນ ຫລື ກຸ່ມອື່ນ.

## ການຟ້ອງຮ້ອງໃຫ້ທັນເວລາ

ການຟ້ອງຮ້ອງຕ້ອງຍື່ນພາຍໃນ 180 ມື້ ໄລ່ຕາມວັນໃນປະຕິທິນຫລັງຈາກມື້ທີ່ທຳການຈຳແນກທີ່ຢູ່ໃນການກ່າວຫານັ້ນເກີດຂຶ້ນ ເວັ້ນເສັຽແຕ່ວ່າເວລາໃນການຍື່ນຄຳຟ້ອງຮ້ອງ ໄດ້ຖືກຍືດອອກໂດຍຫ້ອງການ OCR ຍ້ອນມີເຫດຜົນອັນດີ ດັ່ງທີ່ໄດ້ປະກົດໃຫ້ເຫັນຢູ່ໃນສະພາບການໃດການໜຶ່ງ.

## ຂັ້ນຕອນໃນການຮ້ອງທຸກຕໍ່ສະຖາບັນ

ກ່ອນຈະຍື່ນຄຳຟ້ອງຮ້ອງນຳຫ້ອງການ OCR ເພື່ອຟ້ອງຮ້ອງຕໍ່ສະຖາບັນໃດສະຖາບັນນຶ່ງ, ຜູ້ທີ່ສາມາດທຳການຄຳຟ້ອງຮ້ອງໄດ້ນັ້ນ ອາດຈະຕ້ອງຢາກຊອກຮູ້ຂັ້ນຕອນໃນການຮ້ອງທຸກຂອງສະຖາບັນ ແລະກໍໃຊ້ຂັ້ນຕອນນັ້ນເພື່ອແກ້ໄຂຄຳຟ້ອງຮ້ອງຂອງຕົນ. ແຕ່ຢ່າງໃດກໍຕາມ, ຜູ້ທຳການຄຳຟ້ອງຮ້ອງບໍ່ໄດ້ຖືກຮຽກຮ້ອງໂດຍກົດໝາຍວ່າ ຕ້ອງໃຊ້ຂັ້ນຕອນໃນການຮ້ອງທຸກຂອງສະຖາບັນກ່ອນຈະທຳການຍື່ນຄຳຟ້ອງຮ້ອງນຳຫ້ອງການ OCR. ຖ້າຫາກຜູ້ທຳຄຳຟ້ອງຮ້ອງໃຊ້ຂັ້ນຕອນໃນການຮ້ອງທຸກຂອງສະຖາບັນ ແລະ ກໍເລືອກທີ່ຈະຍື່ນຄຳຟ້ອງຮ້ອງນຳຫ້ອງການ OCR, ຄຳຟ້ອງຮ້ອງຈະຕ້ອງຖືກຍື່ນໃຫ້ຫ້ອງການ OCR ພາຍໃນ 60 ມື້ ພາຍຫລັງໄດ້ທຳຂັ້ນຕອນ ໃນການຮ້ອງທຸກຂອງສະຖາບັນຈົບລົງ.

ຈຸດປະສົງໃຫຍ່ຂອງກະຊວງສຶກສາ ແມ່ນສົ່ງເສີມການບັນລຸຜົນສຳເລັດ ແລະກະກຽມນັກຮຽນໃຫ້ສາມາດແຂ່ງຂັນໃນລະດັບັບໂລກໄດ້ ໂດຍການເສີມຂະຫຍາຍຄຸນນະພາບຂອງການສຶກສາອັນດີເລີດ ແລະ ຮັບປະກັນຄວາມສະເໝີພາບ ໃນການມີໂອກາດເຂົ້າເຖິງການສຶກສາ.

# ຈະຍື່ນຄຳຟ້ອງຢ່າງໃດ

ຜູ້ຟ້ອງຮ້ອງທີ່ຢາກຈະຍື່ນຄຳຟ້ອງຮ້ອງສາມາດທຳການຍື່ນໄດ້ໂດຍການ:

**ທາງໄປສະນີ ຫລື ໂທລະສານ (ແຟັກສ):** ຜູ້ຟ້ອງຮ້ອງສາມາດສົ່ງໜັງສື ໂດຍທາງໄປສະນີ ຫລື ໂທລະສານ (ແຟັກສ) ຫລື ໃຊ້ຟອມຄຳຟ້ອງຮ້ອງໃນການຖືກຈຳແນກ (Discrimination Complaint Form) ຂອງຫ້ອງ ການ OCR ທີ່ມີໃຫ້ຢູ່ໃນສຳນັກງານຮັບຜິດຊອບໃນດ້ານການປະຕິບັດກົດໝາຍແຫ່ງນັ້ນຂອງຫ້ອງການ OCR (ໃຫ້ເບິ່ງລາຍຊື່ສຳນັກງານຂອງ OCR ຢູ່ໃນໃບໂຄສະນານີ້). ຢູ່ໃນຈົດໝາຍຂອງທ່ານ ກະລຸນາບັນຈຸຂໍ້ມູນເຫລົ່ານີ້:

- ຊື່ ແລະ ນາມສະກຸນ, ທີ່ຢູ່ ແລະ ຖ້າເປັນໄປໄດ້ (ເຖິງແມ່ນວ່າບໍ່ຮຽກຮ້ອງໃຫ້ມີກໍຕາມ), ເບີໂທລະສັບທີ່ສາມາດຕິດຕໍ່ຫາຜູ້ຟ້ອງຮ້ອງໄດ້ໃນຊົ່ວໂມງເຮັດການ;
- ຂໍ້ມູນກ່ຽວກັບບຸກຄົນ ຫລື ຈຳພວກຄົນທີ່ຖືກບາດເຈັບໂດຍການກະທຳຕ່າງໆ ທີ່ເປັນການຈຳແນກທີ່ຖືກກ່າວຫາ (ບໍ່ຕ້ອງຂຽນຊື່ຂອງຜູ້ຖືກບາດເຈັບ);
- ຊື່ ແລະ ບ່ອນເກີດເຫດທີ່ສະຖາບັນກະທຳຜິດຕ່າງໆ ທີ່ເປັນການຈຳແນກທີ່ຖືກກ່າວຫາ; ແລະ
- ຄຳບັນລະຍາຍກ່ຽວກັບ ການກະທຳຕ່າງໆ ທີ່ເປັນການຈຳແນກ ທີ່ຖືກກ່າວຫາໃຫ້ມີລາຍລະອຽດພຽງພໍ ເພື່ອຈະເຮັດໃຫ້ຫ້ອງການ OCR ເຂົ້າໃຈກ່ຽວກັບເຫດການທີ່ເກີດຂຶ້ນ, ເວລາທີ່ມັນເກີດຂຶ້ນ, ແລະ ພື້ນຖານຂອງການຈຳແນກ ທີ່ຖືກກ່າວຫາ ເຊື້ອຊາດ, ສີຜິວ, ຊາດກຳເນີດ, ເພດ, ຄວາມເສັຽອົງຄະ ແລະ ອາຍຸ ຫລື ປະຕິບັດກົດໝາຍວ່າດ້ວຍຄວາມສະເໝີພາບໃນການໄດ້ຮັບໂອກາດເຂົ້າເຖິງການຈັດຕັ້ງເຍົາວະຊົນສຳລັບເດັກຊາຍ (Boy Scouts of America Equal Access Act).

**ທາງອີ-ເມວລ:** ຜູ້ຟ້ອງຮ້ອງສາມາດຍື່ນຄຳຟ້ອງໄດ້ ໂດຍສົ່ງອີເມວລໄປຫາທີ່ຢູ່ຕໍ່ໄປນີ້: ocr@ed.gov. ໃຫ້ໃຊ້ຂັ້ນຕອນຕ່າງໆຄືກັນກັບທີ່ໄດ້ກ່າວຢູ່ຂ້າງເທິງນີ້.

**ທາງອິນເຕີເນັດ:** ຜູ້ຟ້ອງຮ້ອງສາມາດຍື່ນຄຳຟ້ອງໄປຫາ OCR ໂດຍໃຊ້ແບບຟອມ ຢູ່ໃນອິນເຕີເນັດຢູ່ທີ່ເວັບໄຊ້ນີ້: http://www.ed.gov/about/offices/list/ocr/complaintintro.html.

ສຳລັບພວກທີ່ບໍ່ມີອີເມວທີ່ຍັງໃຊ້ການໄດ້ ການໃຊ້ອິນເຕີເນັດຢ່າງຟຣີກໍມີໄວ້ໃຫ້ຮັບໃຊ້ແກ່ທ່ານຢູ່ຫ້ອງສະມຸດຂອງຫລວງປະຈຳທ້ອງຖິ່ນ ແລະ ມີອີ-ເມວລຈາກຜູ້ສະໜອງ ອີ-ເມວລລາຍໃຫຍ່ທັງຫລາຍກໍມີໃຫ້ແກ່ທ່ານຟຣີ.

ໝາຍເຫດ: ຜູ້ໄດ້ຮັບຜົນປະໂຫຍດຈາກທຶນຊ່ວຍເຫລືອຂອງລັດຖະບານກາງ ບໍ່ສາມາດແກ້ແຄ້ນຕໍ່ຜູ້ໃດທີ່ໄດ້ຟ້ອງຮ້ອງ, ໃຫ້ຄຳໃຫ້ການ, ຊ່ວຍເຫລືອ ຫລື ເຂົ້າຮ່ວມໃນການສືບສວນ ຫລື ດຳເນີນຄະດີ ບໍ່ວ່າຈະເປັນລັກສະນະໃດກໍຕາມ ຢູ່ພາຍໃຕ້ກົດໝາຍ ທີ່ຂຽນຢູ່ໃນໜ້າທຳອິດຂອງໃບໂຄສະນານີ້. ຖ້າທ່ານເຊື່ອວ່າທ່ານໄດ້ຖືກແກ້ແຄ້ນໂດຍເຫດຜົນໃດໆກໍຕາມ ໃນຈຳນວນເຫດຜົນທີ່ກ່າວມານີ້ ທ່ານສາມາດຍື່ນຄຳຟ້ອງຮ້ອງນຳຫ້ອງການ OCR ໄດ້.

**ກະຊວງສຶກສາສະຫະລັດ**
Arne Duncan
ລັດຖະມົນຕີ

ສິງຫາ 2011

# ຫ້ອງການຕ່າງໆ ແລະ ທີ່ຢູ່

## ສຳນັກງານໃຫຍ່

U.S. Department of Education
Office for Civil Rights
400 Maryland Ave. SW
Washington, DC 20202-1100
ຜູ້ບໍລິການລູກຄ້າ: 800-421-3481
ແຟັກສ: 202-453-6012
TDD: 877-521-2172*
ອີເມວລ: OCR@ed.gov
Web: http:www.ed.gov/ocr

**Connecticut, Maine, Massachusetts, New Hampshire, Rhode Island, Vermont**
Office for Civil Rights, *Boston Office*
U.S. Department of Education
5 Post Office Square, 8th Floor
Boston, MA 02109-3921
ໂທລະສັບ: 617-289-0111*
ແຟັກສ: 617-289-0150
ອີເມວລ: OCR.Boston@ed.gov

**New Jersey, New York, Puerto Rico, Virgin Islands**
Office for Civil Rights, *New York Office*
U.S. Department of Education
32 Old Slip, 26th Floor
New York, NY 10005-2500
ໂທລະສັບ: 646-428-3800*
ແຟັກສ: 646-428-3843
ອີເມວລ: OCR.NewYork@ed.gov

**Delaware, Maryland, Kentucky, Pennsylvania, West Virginia**
Office for Civil Rights, *Philadelphia Office*
U.S. Department of Education
100 Penn Square East, Suite 515
Philadelphia, PA 19107-3323
ໂທລະສັບ: 215-656-8541*
ແຟັກສ: 215-656-8605
ອີເມວລ: OCR.Philadelphia@ed.gov

**Alabama, Florida, Georgia, Tennessee**
Office for Civil Rights, *Atlanta Office*
U.S. Department of Education
61 Forsyth St. SW, Suite 19T70
Atlanta, GA 30303-8927
ໂທລະສັບ: 404-974-9406*
ແຟັກສ: 404-974-9471
ອີເມວລ: OCR.Atlanta@ed.gov

**Arkansas, Louisiana, Mississippi, Texas**
Office for Civil Rights, *Dallas Office*
U.S. Department of Education
1999 Bryan St., Suite 1620
Dallas, Texas 75201-6810
ໂທລະສັບ: 214-661-9600*
ແຟັກສ: 214-661-9587
ອີເມວລ: OCR.Dallas@ed.gov

**North Carolina, South Carolina, Virginia, Washington, D.C.**
Office for Civil Rights, *District of Columbia Office*
U.S. Department of Education
400 Maryland Ave. SW
Washington, DC 20202-1475
ໂທລະສັບ: 202-453-6020*
ແຟັກສ: 202-453-6021
ອີເມວລ: OCR.DC@ed.gov

**Illinois, Indiana, Minnesota, Wisconsin, Iowa, North Dakota**
Office for Civil Rights, *Chicago Office*
U.S. Department of Education
Citigroup Center
500 W. Madison St., Suite 1475
Chicago, IL 60661-7204
ໂທລະສັບ: 312-730-1560*
ແຟັກສ: 312-730-1576
ອີເມວລ: OCR.Chicago@ed.gov

**Michigan, Ohio**
Office for Civil Rights, *Cleveland Office*
U.S. Department of Education
1350 Euclid Avenue, Suite 325
Cleveland, OH 44115
ໂທລະສັບ: 216-522-4970*
ແຟັກສ: 216-522-2573
ອີເມວລ: OCR.Cleveland@ed.gov

**Kansas, Missouri, Nebraska, South Dakota, Oklahoma**
Office for Civil Rights, *Kansas City Office*
U.S. Department of Education
One Petticoat Lane
1010 Walnut Street, Suite 320, 3rd Floor
Kansas City, MO 64106
ໂທລະສັບ: 816-268-0550*
ແຟັກສ: 816-823-1404
ອີເມວລ: OCR.KansasCity@ed.gov

**Arizona, Colorado, New Mexico, Utah, Wyoming**
Office for Civil Rights, *Denver Office*
U.S. Department of Education
Cesar E. Chavez Memorial Building
1244 Speer Blvd., Suite 310
Denver, CO 80204-3582
ໂທລະສັບ: 303-844-5695*
ແຟັກສ: 303-844-4303
ອີເມວລ: OCR.Denver@ed.gov

**California**
Office for Civil Rights, *San Francisco Office*
U.S. Department of Education
50 United Nations Plaza
San Francisco, CA 94102
ໂທລະສັບ: 415-486-5555*
ແຟັກສ: 415-486-5570
ອີເມວລ: OCR.SanFrancisco@ed.gov

**Alaska, Hawaii, Idaho, Nevada, Oregon, Washington, American Samoa, Guam, Northern Mariana Islands, Montana**
Office for Civil Rights, *Seattle Office*
U.S. Department of Education
915 Second Ave., Room 3310
Seattle, WA 98174-1099
ໂທລະສັບ: 206-607-1600
TDD: 206-607-1647
ແຟັກສ: 206-607-1601
ອີເມວລ: OCR.Seattle@ed.gov

*TDD: 877-521-2172